# ການແຕ່ງງານ ແລະ ການຖືພາ ກ່ອນໄວອັນຄວນ






**ຮຽບຮຽງໂດຍ:**
ດຣ ບົວວັນ ສົມສະໜິດ
**ກວດແກ້ໂດຍ:**
ດຣ ສຸດທິສຸກ ອິນທະວິໄລ

# ສະຖິຕິ

- ປະເທດ ເພື່ອນບ້ານ(ໄທ)
- ໂດຍສູນ ສຸຂະພາບ ການຈະເລີນພັນ ແຫ່ງ ກົມອານາໄມ ລະບຸວ່າ ໃນປີ 2015 ມີອັດຕາການເກີດລູກ ໃນຊ່ວງ ອາຍຸ 15 ຫາ 19 ປີ /ປະຊາກອນຍິງ ໃນຊ້ວງອາຍຸດຽວ ກັນ ໃນນັ້ນ 44,8ຄົນ /1,000 ຄົນ
- ສາຍເຫດຈາກການ ລິມນະລິງ ເພື່ອການປ້ອງກັນ ການ ຖືພາກອ່ນໄວອັນຄວນ ຂອງພາກລັດ ແລະ ພາກ ເອກະ ຊົນ ເຮັດໃຫ້ ຄິດເຖິງບັນຫາ ແລະ ຜົນກະທົບຫຼາຍຂຶ້ນ

# ສະຖິຕິ

- ໄວໜຸ່ມ ຖືພາ ໃນລາວມີ 19% ຂອງຜູ້ຍິງ ທີ່ກາຍເປັນແມ່ ແຕ່ອາຍຸກ່ອນ 18 ປີ ເຊິ່ງເປັນອັນດັບຕົ້ນໆ ຂອງຊາວອາຊີ ຕາເວັນອອກສ່ຽງໃຕ້ ເຊິ່ງການສຶກສາ ແມ່ນໄດ້ສຶກສາໃນປີ 2017 ຢູ່ນະຄອນຫຼວງວຽງຈັນ ຢູ່ມະຫາວິທະຍາໄລ
- ສ່ວນຫຼາຍການຖືພາກ່ອນໄວ ອັນຄວນ ແມ່ນ ຍ້ອນບໍ່ມີຄວາມຮູ້ເລື່ອງເພດ ແລະ ກໍບໍ່ໄດ້ຮັບການສຶກສາທາງດ້ານເພດ ທີ່ມີຄຸນນະພາບ

สะມາຄົມສົ່ງເສີມສຸຂະພາບຄອບຄົວ
(PFHA)

# ຕົວເລກ ໄວໜຸ່ມຍິງຖືພາ ແລະ ອອກລູກ ໃນ ສປປ ລາວ

- ໃນປະເທດລາວ ອັດຕາຂອງໄວຫນຸ່ມຖືພາ ແລະ ເກີດລູກແມ່ນສູງຫຼາຍ ແລະ ສູງທີ່ສຸດໃນພາກພື້ນ
- ໃນກຸ່ມເຍົາວະຊົນ ແລະ ໄວໜຸ່ມຖືພາ ແລະ ເກີດລູກ 15-19 ປີ ແມ່ນ 83/1000 ຂອງການເກີດມີຊີວິດ (ເກືອບ 1ໃນ 10 ຂອງເຍົາວະຊົນ ແລະ ໄວໜຸ່ມຍິງອາຍຸ 15-19 ປີ)
- ເປັນດັ່ງນີ້ກໍ່ເນື່ອງຈາກທຳນຽມການປະຕິບັດຕາມຮີດຄອງປະເພນີທີ່ໄວໜຸ່ມຍິງຕ້ອງແຕ່ງງານ ແລະ ມີລູກ ແຕ່ອາຍຸຍັງນ້ອຍ ໂດຍສະເພາະຢູ່ໃນເຂດຊົນນະບົດ.

# ຕົວເລກ ໄວໜຸ່ມຍິງຖືພາ ແລະ ອອກລູກ ໃນ ສປປ ລາວ(ຕໍ່)

- ໄວໜຸ່ມຍິງ ໃນອາຍຸ 15-19 ປີ ແມ່ນ 75 ຄົນ/1.000 ແມ່ຍິງເກີດລູກ
- ໄວໜຸ່ມຍິງ ເກືອບ 40% ກ່ອນອາຍຸ ມີລູກຄົນທໍາອິດກ່ອນອາຍຸ 17 ປີ
- ໄວໜຸ່ມຍິງ ທີ່ບໍ່ມີການສຶກສາ 15-19 ປີ ເກີດລູກ 158 ຄົນ/1000 ຄົນ ທຽບໃສ່ລະດັບການສຶກສາຊັ້ນມັດທະຍົມ ມີພຽງ 49 ຄົນ ແລະ 26 ຄົນ ຢູ່ ວິທະຍາໄລ ແລະ ມະຫາວິທະຍາໄລ

ສະມາຄົມສົ່ງເສີມສຸຂະພາບຄອບຄົວ
(PFHA)

# ຕົວເລກ ໄວໜຸ່ມຍິງຖືພາ ແລະ ອອກລູກ ໃນ ສປປ ລາວ(ຕໍ່)

- ໄວໜຸ່ມຍິງຖືພາ 44% ແມ່ນຢູ່ຊັ້ນປະຖົມ ແລະ ຮຽນບໍ່ຈົບ
- 33% ແມ່ນ ລະດັບມັດທະຍົມ ແລະ ວິຊາຊີບ
- ໃນເຂດຊົນນະບົດ<17 ປີ ໄວໜຸ່ມຍິງຖືພາ=26,7%
- 65,9% ແມ່ນໄວໜຸ່ມ 17-19 ປີ ເຊິ່ງແມ່ນອາຍຸ ຕອນມີ ລູກ ຜູ້ທຳອິດ

*ຂໍ້ມູນໄດ້ມາຈາກ LSIS*

*ສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໃສຄັ້ງທີ IV,2015 (ໜ້າ 47-49)*

# ການອອກລູກ ຂອງໄວໜຸ່ມ ຍິງ ຢູ່ ສປປລາວ 2015

- ຜົນສໍາຫລວດພົນລະເມືອງ ແລະ ທີ່ຢູ່ອາໃສຄັ້ງທີ່ IV,2015

(ອັດຕາຈະເລີນພັນແບ່ງຕາມໝວດອາຍຸໜ້າ 44, ຮູບ 4.3.

ຮູບສະແດງ 4.3 ອັດຕາການຈະເລີນພັນ ແບ່ງຕາມໝວດອາຍຸ ແລະ ເຂດທີ່ຢູ່ອາໃສ



ສະມາຄົມສົ່ງເສີມສຸຂະພາບຄອບຄົວ
(PFHA)

# ຈຸດປະສົງການແຕ່ງງານ ກ່ອນໄວອັນຄວນ

1. ເພື່ອໃຫ້ຮູ້ ແລະ ເຂົ້າໃຈ ກ່ຽວກັບຄວາມໝາຍ, ຜົນສະທ້ອນ ການແຕ່ງງານ ກ່ອນໄວອັນຄວນ.
2. ເພື່ອໃຫ້ສາມາດ ໄຈ້ແຍກຜົນກະທົບ ການແຕ່ງງານ ກ່ອນໄວອັນຄວນ ກໍຄື ອາຍຸ 18 ປີ ລົງມາ
3. ວິທີການປ້ອງກັນ ການແຕ່ງງານ ກ່ອນໄວອັນຄວນ



# ບົດຝຶກຫັດ

- ແບ່ງຜູ້ເຂົ້າຮ່ວມເປັນ 2 ກຸ່ມ: ກຸ່ມລະ 8 ຫາ 10 ຄົນ (ລວມຍິງ/ຊາຍ)
  - ຄຳຖາມ ກຸ່ມ 1: ຄູ່ແຕ່ງງານໜຸ່ມ ແມ່ນໃຜ?
  - ຄຳຖາມ ກຸ່ມ 2: ການແຕ່ງງານກ່ອນໄວອັນຄວນ ມີຜົນສະທ້ອນຫຍັງແດ່ ? ດ້ານດີ ແລະ ດ້ານ ອ່ອນ ?

*ຫຼັງຈາກສົນທະນາກັນແລ້ວ ໃຫ້ ຕົວແທນ ແຕ່ລະກຸ່ມ ນຳສະເໜີ ແລະ ໃຫ້ ກຸ່ມອື່ນ ປະກອບຄຳຄິດເຫັນໃສ່ຕື່ມ*

# ຄວາມໝາຍ ຂອງການແຕ່ງງານກ່ອນໄວອັນຄວນ

❑ການແຕ່ງງານກ່ອນໄວອັນຄວນ ໝາຍເຖິງ:

ແມ່ຍິງ ແລະ ຜູ້ຊາຍ ທີ່ມີອາຍຸຕ່ຳກວ່າ 18 ປີ ມີການແຕ່ງງານ ຫຼື ສ້າງຄອບຄົວ, ມີຊີວິດຮ່ວມກັນ



# ຜົນສະທ້ອນຂອງການແຕ່ງງານກ່ອນໄວອັນຄວນ(ຕໍ່)

❑ ຖ້າແຕ່ງງານແຕ່ອາຍຸຍັງນ້ອຍ ແມ່ຍິງ ແລະ ຊາວໜຸ່ມ ຈະເສຍໂອກາດຕ່າງໆ ເຊັ່ນ:

- ເຮັດໃຫ້ ແມ່ຍິງ ແລະ ຜູ້ຊາຍ ອອກໂຮງຮຽນ ແຕ່ອາຍຸຍັງນ້ອຍ
- ເສຍໂອກາດໃນການຮຽນຕໍ່ວິຊາຊີບ, ບໍ່ໄດ້ຮັບຂໍ້ມູນຂ່າວສານ ແລະ ຄວາມຮູ້ ຕ່າງໆ
- ບໍ່ມີໂອກາດທີ່ຈະໃຊ້ຊີວິດແບບນັກຮຽນ

ສະມາຄົມສົ່ງເສີມສຸຂະພາບຄອບຄົວ
(PFHA)

# ຜົນສະທ້ອນຂອງການແຕ່ງງານກ່ອນໄວອັນຄວນ(ຕໍ່)

- ບໍ່ມີໂອກາດ ຫຼິ້ນກັບໝູ່ເພື່ອນໃນໂຮງຮຽນ,ບໍ່ໄດ້ເຂົ້າຮ່ວມ ກິດຈະກຳ ສັງຄົມ
- ເສຍໂອກາດໃນການພັດທະນາໂຕເອງ ທາງດ້ານແນວຄິດ ກັບໝູ່ເພື່ອນ
- ຖືພາກ່ອນໄວອັນຄວນ(ອາຍຸຍັງນ້ອຍ) ແມ່ ແລະ ລູກ ມີ ຄວາມສ່ຽງຕໍ່ການເສຍຊີວິດ
- ຂາດໂອກາດ ໃນການສ້າງເສດຖະກິດຄອບຄົວ

# ຜົນສະທ້ອນຂອງການແຕ່ງງານກ່ອນໄວອັນຄວນ(ຕໍ່)

- ຖ້າແຕ່ງງານກ່ອນໄວອັນຄວນ(ອາຍຸຍັງນ້ອຍ) ຈະເຮັດໃຫ້ແມ່ ມີໂອກາດສູງ ທີ່ຈະຖືພາກ່ອນໄວອັນຄວນ ເຮັດໃຫ້ມີຜົນກະທົບ ຕໍ່ສຸຂະພາບຂອງແມ່
- ຖ້າອອກໂຮງຮຽນ ແຕ່ ອາຍຸຍັງນ້ອຍ ຈະບໍ່ໄດ້ຮັບການສຶກສາ ເຮັດໃຫ້ ການເຮັດວຽກໄດ້ ແຕ່ ແຮງງານຂັ້ນຕໍ່າ ຫຼື ອາດຈະເຮັດໄຮ່, ນາ ເທົ່ານັ້ນ
- ຂາດໂອກາດໄດ້ເປັນພະນັກງານ ທີ່ມີລາຍຮັບດີ ເຮັດໃຫ້ ການສ້າງເສດຖະກິດ ຄອບຄົວຊ້າ

ສະມາຄົມສົ່ງເສີມສຸຂະພາບຄອບຄົວ
(PFHA)

# ວົງຈອນທີ່ມີຜົນກະທົບໃນກໍລະນີການແຕ່ງງານກ່ອນໄວອັນຄວນ

ລູກ ແມ່ຍິງ ຖືກພໍ່ ແມ່ ແນະນຳໃຫ້ ອອກໂຮງຮຽນ,ບໍ່ມີວຽກເຮັດ

ກຶກໜັງສື,ຂາດອາຊີບຖາວອນ (ມີອາຊີບພໍກຸ້ມກິນ)

ແຕ່ງງານ(ເອົາຜົວ),ມີລູກແຕ່ ອາຍຸຍັງນ້ອຍ,ແມ່ບໍ່ ແຂງແຮງ,ຄອບຄົວທຸກຍາກ

ສະມາຄົມສົ່ງເສີມສຸຂະພາບຄອບຄົວ
(PFHA)

# [ການປ້ອງກັນການແຕ່ງງານ ກ່ອນໄວອັນຄວນ










ຜູ້ປົກຄອງຄວນ ສ້າງເງື່ອນໄຂ ແລະ ຄວບຄຸມພຶດຕິກຳ ແລະ ຮ່ວມມືກັບຄູ ໃນໂຮງຮຽນ

ຜູ້ປົກຄອງຄວນ ໃສ່ໃຈ ໃນທຸກໆ ເລື່ອງຂອງລູກຕົນ ເອງ

ສ້າງຄວາມເຂົ້າໃຈ ໃຫ້ເຫັນຄຸນຄ່າ ຂອງຄວາມເປັນ ຜູ້ຍິງ ໃນການຮັກ ນວນສະຫງວນໂຕ

ການປັບປ່ຽນ ພຶດຕິກຳ ການມີ ເພດສຳພັນ ຂອງ ໄວ ໜຸ່ມກ່ອນໄວ ອັນຄວນ

# ສະຫຼູບ ແລະ ຖາມຜູ້ເຂົ້າຮ່ວມ

- ທ່ານຄິດແນວໃດ ກ່ຽວກັບຄູ່ແຕ່ງງານ ກ່ອນໄວອັນຄວນ?
- ໃຫ້ແຕ່ລະຄົນ ສາມາດເວົ້າຄືນໄດ້ບໍ່?
- ຜົນກະທົບ ຕໍ່ການແຕ່ງງານ ກ່ອນໄວອັນຄວນມີຫຍັງ
- ທ່ານໄດ້ຮຽນຮູ້ຫຍັງ ຈາກການ ສົນທະນາໃນຫົວຂໍ້ນີ້
- ໃຫ້ ທ່ານ ເວົ້າເຖິງ ຜົນກະທົບ ການຖືພາກ່ອນໄວອັນຄວນ ທີ່ທ່ານຮູ້ ມີຫຍັງແດ່?



# ການຖືພາກ່ອນໄວອັນຄວນ



ສະມາຄົມສົ່ງເສີມສຸຂະພາບຄອບຄົວ (PFHA)

# ຈຸດປະສົງການຖືພາກ່ອນໄວອັນຄວນ

1. ເພື່ອໃຫ້ຜູ້ເຂົ້າຮ່ວມ ຮູ້ເຖິງ ຄວາມໝາຍຂອງການຖືພາກ່ອນໄວອັນຄວນ
2. ສາຍເຫດ ຂອງການຖືພາກ່ອນໄວອັນຄວນ
3. ຜົນກະທົບ ຂອງການຖືພາກ່ອນໄວອັນຄວນ
4. ບັນຫາ ທາງດ້ານເສດຖະກິດ ແລະ ສັງຄົມ

# ສະຖິຕິການຖືພາກ່ອນໄວອັນຄວນ

## 1. ປະເທດ ເພື່ອນບ້ານ(ໄທ)

- ໂດຍສູນ ສຸຂະພາບ ການຈະເລີນພັນ ແຫ່ງ ກົມອານາໄມລະບຸວ່າ ໃນປີ 2015 ມີອັດຕາການເກີດລູກ ໃນຊ່ວງ ອາຍຸ 15 ຫາ 19 ປີ /ປະຊາກອນຍິງ ໃນຊ້ວງອາຍຸດຽວກັນ ໃນນັ້ນ 44,8ຄົນ /1,000 ຄົນ

- ສາຍເຫດຈາກການ ລົມນະລົງ ເພື່ອການປອ້ງກັນ ການຖືພາກອ່ນໄວອັນຄວນ ຂອງພາກລັດ ແລະ ພາກ ເອກະຊົນ ເຮັດໃຫ້ ຄົດເຖິງບັນຫາ ແລະ ຜົນກະທົບ ຫຼາຍຂຶ້ນ

# ສະຖິຕິການຖືພາກ່ອນໄວອັນຄວນ(ຕໍ່)

## 2. ປະເທດລາວ

- ສປປ ລາວ ມີອັດຕາການຈະເລີນພັນຫຼຸດລົງຢ່າງຕໍ່ເນື່ອງ, ລາຍງານລ້າສຸດ ອັດຕາການເກີດ ແມ່ນ 2,7 ກໍລະນີຕໍ່ແມ່ຍິງໜຶ່ງຄົນ ໃນປີ 2017 ອັດຕາການຈະເລີນພັນສະເພາະກຸ່ມອາຍຸສະແດງໃຫ້ເຫັນເຖິງອັດຕາກາາວຈະເລີນພັນທີ່ສູງໂດຍສະເພາະໃນກຸ່ມໄວໜຸ່ມ
- ໂດຍມີໄວໜຸ່ມເກືອບ 1 ໃນ 10 ຄົນໄດ້ເກີດລູກ (ອັດຕາການເກີດ 83 ຄົນຕໍ່ແມ່ຍິງ 1,000 ຄົນທີ່ມີອາຍຸ 15-19 ປີ). ສິ່ງນີ້ ຍັງຫ່າງໄກຈາກເປົ້າໝາຍປີ 2025
- ຊຶ່ງມີເປົ້າໝາຍການເກີດ 65 ກໍລະນີຕໍ່ແມ່ຍິງ 1,000 ຄົນ ທີ່ມີອາຍຸ 15-19 ປີ ຊຶ່ງຊີ້ໃຫ້ເຫັນວ່າ ສປປ ລາວ ຕ້ອງໄດ້ກຳນົດເປົ້າໝາຍໃນການວາງແຜນຄອບຄົວ ສຳລັບກຸ່ມປະຊາກອນດັ່ງກ່າວ
- . ຕົວເລກເຫຼົ່ານີ້ ແມ່ນຈຳນວນຕົວເລກທີ່ສູງຂຶ້ນໃນກຸ່ມໄວໜຸ່ມໃນເຂດຊົນນະບົດ ກຸ່ມທີ່ມີລາຍຮັບ ແລະ ການສຶກສາຕໍ່າ.
- ລະດັບການຈະເລີນພັນຂອງໄວໜຸ່ມທີ່ສູງຄວນໄດ້ຮັບການເອົາໃຈໃສ່ເປັນພິເສດ ເນື່ອງຈາກວ່າ ແມ່ທີ່ມີອາຍຸນ້ອຍ ແລະ ລູກຂອງເຂົາເຈົ້າ ແມ່ນມີຄວາມສ່ຽງສູງທີ່ສຸດ
- ໃນການເກີດອາການສົນລະຫວ່າງການຖືພາ ແລະ ລະຫວ່າງການເກີດລູກ, ການມີລູກໃນເວລາທີ່ອາຍຸຍັງນ້ອຍເຮັດໃຫ້ແມ່ຍິງມີຂໍ້ຈຳກັດທາງດ້ານໂອກາດໃນການສຶກສາ ແລະ ການເຮັດວຽກ.

ສະມາຄົມສົ່ງເສີມສຸຂະພາບຄອບຄົວ
(PFHA)

# ຖາມຄຳຄິດເຫັນຂອງຜູ້ເຂົ້າຮ່ວມ






## ໃຜເຄີຍຫຼິ້ນ






# ການສົ່ງຜົນສະທ້ອນຂອງເທັກໂນໂລຢີ້

ເພາະເທັກໂນໂລຢີ້ ທີ່ທຸກຄົນ ມີຢູ່ໃນມືຂອງບັນດາທ່ານ ທີ່ມີສ່ວນ ເຮັດໃຫ້ ການ ຕັດສິນໃຈຜິດພາດໄດ້ ສະເພາະຄົນທີ່ມີແຟນ



# ຄວາມໝາຍຂອງການຖືພາ ກ່ອນໄວອັນຄວນ

❑ ແມ່ນໝາຍເຖິງ:

ການຖືພາ ແລະ ການເກີດລູກ ຊ່ວງອາຍຸ 10 ຫາ 19 ປີ



ສະມາຄົມສົ່ງເສີມສຸຂະພາບຄອບຄົວ
(PFHA)

# ❑ບັນດາ ທ່ານຄິດວ່າ ການຖືພາ ກ່ອນໄວອັນຄວນນີ້:

- *ເກີດມາຈາກ ສາຍເຫດ ການລືມກັນ ຜ່ານແອັບ ຢ່າງດຽວ ບໍ່ ?*



# ສາຍເຫດ
# ການຖືພາກ່ອນໄວອັນຄວນ

1. ບໍ່ມີການປ້ອງກັນ ແລະ ບໍ່ມີການຄຸມກຳເນີດ
2. ຂາດຄວາມຮູ້ໃນການນຳໃຊ້ ເຄື່ອງມືປ້ອງກັນ ຫຼື ໃຊ້ຢ່າງຜິດວິທີ ຈຶ່ງບໍ່ສາມາດປ້ອງກັນໄດ້
3. ຂາດຄວາມເຂົ້າໃຈ ແລະ ການສົນທະນາກັນ ໃນຄອບຄົວ ການກອດລູກຫອມລູກຢ່າງດຽວຍັງບໍ່ພໍ ເພາະເດັກຕ້ອງການ(ການສົນທະນາ ທຳຄວາມເຂົ້າໃຈ) ພໍ່ແມ່ ຄວນຮັບຟັງບັນຫາຂອງລູກໃຫ້ເຂົ້າໃຈ ແນະແນວທາງອອກໃຫ້ເໝາະສົມ ເພາະສະນັ້ນ ລູກຈະໂຫຍຫາ ຄວາມຮັກຈາກຄົນອື່ນ ເຊິ່ງເຮັດໃຫ້ຫຼົງຜິດໄດ້

ສະມາຄົມສົ່ງເສີມສຸຂະພາບຄອບຄົວ
(PFHA)

# ສາຍເຫດ ການຖືພາກ່ອນໄວອັນຄວນ(ຕໍ່)

4. ຂາດຄົນຊີ້ແນະ ໃຫ້ຄຳແນະນຳເລື້ອງເພດສຶກສາ ເຊິ່ງ ແມ່ນພໍ່ ແລະ ແມ່ ຄວນເປັນຄົນທຳອິດ ໃນການໃຫ້ຄຳປຶກສາເລື້ອງນີ້
5. ມັກຢູ່ຄົນດຽວ ມັກໃຊ້ເວລາໄປກັບ ອິນເຕີເນັດ ຫຼື ມັກເບິ່ງໜັງສື ທີ່ບໍ່ເໝາະສົມ ຖືກລ່ວງລະເມີດທາງເພດ ຫຼື ຖືກກະທຳສຳເລົາໄດ້
6. ເປັນກຸ່ມວັດຖຸ ນິຍົມ ຍອມເອົາຕົວເຂົ້າແລກ ເພື່ອໃຫ້ໄດ້ເງິນ ແລະ ສິ່ງຂອງ ທີ່ຕອ້ງການ

# ຜົນກະທົບ
# ການຖືພາກ່ອນໄວອັນຄວນ

1.ບໍ່ເອົາໃຈໃສ່ໃນການຝາກທ້ອງ ເພາະຄວາມບໍ່ຮູ້ ວ່າຄວນຈະຝາກທ້ອງຕັ້ງແຕ່ທີ່ຮູ້ວ່າຖືພາ ເພື່ອໃຫ້ໝໍໄດ້ກວດເຊັກ ຄວາມຜິດປົກກະຕິ ຂອງເດັກໃນທ້ອງໄດ້



# ຜົນກະທົບ
# ການຖືພາກ່ອນໄວອັນຄວນ

2. ສ່ຽງຕໍ່ພາວະ ຄວາມດັນເລືອດສູງ ໃນຊ້ວງໄລຍະຖືພາ ແລະ ອາດຈະເກີດ ພາວະ ການຖືພາ ເປັນພິດໄດ້






# ຜົນກະທົບ ການຖືພາກ່ອນໄວອັນຄວນ

3. ສ່ຽງຕໍ່ການຂາດເລືອດ ໃນ ໄລຍະຖືພາ



4. ສ່ຽງຕໍ່ພາວະຊືມເສົ້າ ຫຼັງເກີດລູກ



*ໂດຍສະເພາະ ຫາກເປັນແມ່ລ້ຽງດ່ຽວ, ຄວນປຶກສາຄົນທີ່ໄວ້ໃຈໄດ້ ຫຼືແພດໝໍ, ບໍ່ຄວນເກັບ ບັນຫາຕ່າງໆ ໄວ້ຄົນດຽວ*

# [ບັນຫາ ການຖືພາກ່ອນໄວອັນຄວນ

## I. ບັນຫາຕໍ່ໂຕເອງ

1.ເພາະເປັນແມ່ ທີ່ອາຍຸຍັງນ້ອຍ ສູນເສຍ ທາງດ້ານການຮໍ່າຮຽນ, ຮຽນບໍ່ຈົບ ຕ້ອງຮັບພາລະຫຼາຍຢ່າງ




2. ການສຶກສາຕໍ່າ ເສຍອານາຄົດ ບໍ່ກ້າເຂົ້າໄປຫາໝູ່ເພື່ອນ



# [ບັນຫາການຖືພາກອ່ນໄວອັນຄວນ(ຕໍ່)

## II. ບັນຫາຕໍ່ຄອບຄົວ





1. ສ້າງຄວາມທຸກໃຫ້ພໍ່ ແລະ ແມ່
2. ເຊື່ອມເສຍຊື່ສຽງຂອງວົງຕະກູນ
3. ເກີດຄວາມບໍ່ເຂົ້າໃຈກັນ ຂອງຄົນໃນຄອບຄົວ
4. ເກີດປັນຫາເລື່ອງຄ່າໃຊ້ຈ່າຍໃນການລ້ຽງດູເດັກ
5. ເກີດປັນຫາ ການຢ່າຮ້າງຫລາຍຂຶ້ນ

ສະມາຄົມສົ່ງເສີມສຸຂະພາບຄອບຄົວ
(PFHA)

# [ບັນຫາການຖືພາກ່ອນໄວອັນຄວນ(ຕໍ່)









## III. ບັນຫາຕໍ່ເສດຖະກິດ ແລະ ສັງຄົມ:

1. ຮຽນບໍ່ຈົບ ຈຶ່ງເຮັດໃຫ້ການເຮັດວຽກ ຈະໄດ້ ຮັບເງິນເດືອນ ໜ້ອຍ
2. ຕາມໄປດ້ວຍການບໍ່ພໍລ້ຽງຕົນເອງ ແລະ ລູກ
3. ສິ່ງຜິນຕໍ່ ຄຸນນະພາບຊີວິດ
4. ອາດຕ້ອງຫັນໄປເພິ່ງພາຢາເສບຕິດ
5. ຈົນພັດທະນາກາຍໄປເປັນຜູ້ຂາຍເອງ
6. ກາຍເປັນບັນຫາ ສັງຄົມໄດ້




*ເພາະສະນັ້ນ*

*ການປ້ອງກັນ ທີ່ດີ ທີ່ສຸດຄື ບໍ່ຄວນມີເພດສຳພັນກ່ອນໄວອັນຄວນ*

# [ບັນຫາການຖືພາກອ່ນໄວອັນຄວນ(ຕໍ່)

- ປະຈຸບັນນີ້ ລັດທະບານ ເປີດໃຫ້ການບໍລິການ ໃນສະຖານທີ່ ການບໍລິການໃຫ້ຄຳປຶກສາ ດ້ານການວາງແຜນຄອບຄົວ ແລະ ວິທີການຄຸມກຳເນີດ ກໍຄື ຢູ່ໂຮງໝໍ ຊຸມຊົນ ໂຮງໝໍນ້ອຍ
- ສະນັ້ນແລ້ວ ຄວາມຮັກ ຄວາມເຂົ້າໃຈ ແລະ ຄວາມຫ່ວງໃຍຂອງຄອບຄົວ ເພື່ອເປັນພື້ນຖານສຳຄັນ ເພື່ອໃຫ້ລູກໄດ້ມີການປອ້ງກັນທີ່ແຂງແກ່ງ ສາມາດໃຊ້ຊີວິດຢູ່ໄດ້ໃນສັງຄົມປະຈຸບັນນີ້ໄດ້

# [ການປ້ອງກັນການຖືພາກ່ອນໄວອັນຄວນ



1. ປິດໂອກາດ ຕໍ່ພຶດຕິກຳສ່ຽງທາງເພດ
2. ການຄຸມກຳເນີດປ້ອງກັນການຖືພາໄດ້
3. ຄວາມສຳພັນທີ່ດີລະຫວ່າງຄອບຄົວ
4. ຫລີກລ້ຽງພຶດຕິກຳທີ່ສ່ຽງຕໍ່ຕົນເອງ
5. ການປະຕິເສດ ເປັນການຊ່ວຍລົດຄວາມຕ້ອງການທາງເພດ
6. ຮຽນຮູ້ເຖິງຄວາມຄິດ ທີ່ແຕກຕ່າງກັນ ຂອງຍິງ ແລະ ຊາຍ ໃນເລື່ອງເພດ.

# [ສະຫລຸບ

ໄວໜຸ່ມເປັນໄວທີ່ເຂົ້າໃຈຍາກ ຕ້ອງການອິດສະລະເສລີ ແລະ ມີໂລກສ່ວນໂຕສູງ

ດັ່ງນັ້ນ, ຄວາມສຳພັນທີ່ດີ ຂອງພໍ່ແມ່ ຕະຫລອດທັງຄວາມຮັກ, ຄວາມເຂົ້າໃຈກັນໃນຄອບຄົວ ຈະຊ່ວຍໄວໜຸ່ມ ຫ່າງໄກຈາກບັນຫາ ການແຕ່ງງານ ແລະ ຖືພາກ່ອນໄວອັນຄວນໄດ້



# ຂອບໃຈ

## ສິ່ງຕ້ອງຫ້າມ ການແຕ່ງງານ ແລະ ການຖືພາ ກ່ອນໄວອັນຄວນ

